ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງອັດຕະປື

ພະແນກອຸດສາຫະກໍາ ແລະ ການຄ້າ — ເລກທີ..1364..../ອຄ.ອປ

(ຄະນະກໍາມະການປະມູນຂາຍໄມ້ຍືດຂັ້ນແຂວງ) — ທີ່ອັດຕະປື, ວັນທີ..24..ທັນວາ..2018

## ແຈ້ງການປະມູນ

ເຖິງ : ຜູ້ອໍານວຍການໂຮງງານປຸງແຕ່ງໄມ້ ແລະໂຮງງານເຟີນີເຈີໄມ້ສໍາເລັດຮູບ ພາຍໃນແຂວງ.

ເລື່ອງ : ເຊີນເຂົ້າຮ່ວມປະມູນຊື້ໄມ້ຂອງໄມ້ຍຶດຢູ່ສາງ ຫຼັກ 3 ຈໍານວນ 05 ບັນຊີ ເທົ່າກັບ 4.733 ທ່ອນ/ຕັບ/ເສັ້ນ/ແຜ່ນ, ບໍລິມາດ : 88,639 ມ3 ( ແປດສິບແປດຈຸດຫົກສາມເກົ້າແມັດກ້ອນ ).

- ອີງຕາມ ຄໍາສັ່ງ ເລກທີ່ 15/ນຍ, ລົງວັນທີ່ 13/05/2016 ກ່ຽວກັບການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມ ຂໍ້ຕົກລົງ ເລກທີ 0918/ອຄ.ຈພງ, ວັນທີ 10 ກໍລະກົດ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ ແລະນະຄອນຫຼວງວຽງຈັນ.
- ອີງຕາມ ຄໍາສັ່ງແນະນໍາ ສະບັບເລກທີ 0336/ອຄ.ກຂອ, ວັນທີ 13 ມີນາ 2017 ວ່າດ້ວຍການແນະນໍາການຈັດຕັ້ງປະຕິບັດປະມູນຂາຍໄມ້ຍຶດເປັນຂອງລັດ.
- ອີງຕາມ ສະໂນດນໍາສົ່ງບັນຊີໄມ້ສະໜາມ II ຂອງພະແນກການເງິນແຂວງ ສະບັບເລກທີ 837 932/ກງຂ, ລົງວັນທີ 09 ພະຈິກ 2018 ແລະ ວັນທີ 18 ທັນວາ 2018.

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງອັດຕະປື ( ຄະນະກໍາມະການປະມູນຂາຍໄມ້ຍຶດຂັ້ນແຂວງ ) ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຊາບ ກ່ຽວກັບການຈັດຕັ້ງປະມູນຂາຍໄມ້ຍຶດຂອງແຂວງອັດຕະປື ເຊິ່ງມີລາຍລະອຽດ ດັ່ງນີ້ :

I. ໄມ້ຍຶດຢູ່ສາງ ຫຼັກ 03 ( ສາງພະແນກອຸດສາຫະກໍາ ແລະການຄ້າ ) ທີ່ຈະປະມູນຂາຍ ມີຈໍານວນທັງໝົດ 05 ບັນຊີ ເທົ່າກັບ 4.733 ທ່ອນ/ຕັບ/ເສັ້ນ/ແຜ່ນ, ບໍລິມາດ : 88,639 ແມັດກ້ອນ ໃນນັ້ນ :

- ໄມ້ດູ່ ມີບໍລິມາດທັງໝົດ : 68,083 ( ຫົກສິບແປດຈຸດສູນແປດສາມ )ແມັດກ້ອນ. ໃນນັ້ນ
  - + ໄມ້ດູ່ ທ່ອນ ມີບໍລິມາດ : 2,445 ( ສອງຈຸດສີ່ສີ່ຫ້າ )ແມັດກ້ອນ.
  - + ໄມ້ດູ່ ຕັບ ມີບໍລິມາດ : 10,823 ( ສິບຈຸດແປດສອງສາມ )ແມັດກ້ອນ.
  - + ໄມ້ດູ່ ເຄິ່ງສໍາເລັດຮູບ+ຊິ້ນສ່ວນ ມີບໍລິມາດ : 54,815(ຫ້າສິບສີ່ຈຸດແປດໜຶ່ງຫ້າ)ແມັດ ກ້ອນ.
- ໄມ້ປະດົງ ທ່ອນ ມີບໍລິມາດ : 0,145 ( ສູນຈຸດໜຶ່ງສີ່ຫ້າ ) ແມັດກ້ອນ.
- ໄມ້ມັນປາ ເຄິ່ງສໍາເລັດຮູບ+ຊິ້ນສ່ວນມີບໍລິມາດ : 1,188 ( ໜຶ່ງຈຸດໜຶ່ງແປດແປດ ) ແມັດກ້ອນ.
- ໄມ້ບາກ ມີບໍລິມາດທັງໝົດ : 19,223 ( ສິບເກົ້າຈຸດສອງສອງສາມ )ແມັດກ້ອນ. ໃນນັ້ນ
  - + ໄມ້ບາກ ຕັບ ມີບໍລິມາດ : 14,317 ( ສິບສີ່ຈຸດສາມໜຶ່ງເຈັດ )ແມັດກ້ອນ.
  - + ໄມ້ບາກ ເຄິ່ງສໍາເລັດຮູບ+ຊິ້ນສ່ວນ ມີບໍລິມາດ : 4,906 ( ສີ່ຈຸດເກົ້າສູນຫົກ )ແມັດກ້ອນ.

ລາຍລະອຽດແຕ່ລະບັນຊີດັ່ງນີ້ :

1. ບັນຊີເລກທີ 320/ກກປຂ, ລົງວັນທີ 29/10/2018 ຈໍານວນ 4.059 ເສັ້ນ/ແຜ່ນ, ບໍລິມາດ 50,076 ແມັດກ້ອນ ( ໄມ້ດູ່ ແລະໄມ້ມັນປາ ຊິ້ນສ່ວນ ) ຢູ່ສາງ ຫຼັກ 03.
2. ບັນຊີເລກທີ 321/ກກປຂ, ລົງວັນທີ 29/10/2018 ຈໍານວນ 107 ເສັ້ນ/ແຜ່ນ, ບໍລິມາດ 18,099 ແມັດກ້ອນ ( ໄມ້ບາກ ຕັບ ແລະຊິ້ນສ່ວນ ) ຢູ່ສາງ ຫຼັກ 03.

5. ບັນຊີເລກທີ 367/ກກປຂ, ລົງວັນທີ 12/12/2018 ຈຳນວນ 446 ຕົບ/ເສັ້ນ/ແຜ່ນ, ບໍລິມາດ 8,557 ແມັດກ້ອນ (ໄມ້ດູ່ ຕົບ ແລະໄມ້ສັກ ປັກ(ກ) ຢູ່ສາງພາສີດ່ານສາກົນພູເກືອ.

6. ບັນຊີເລກທີ 368/ກກປຂ, ລົງວັນທີ 12/12/2018 ຈຳນວນ 371 ຕົບ, ບໍລິມາດ 3,307 ແມັດກ້ອນ (ໄມ້ປະດູ່ ຕົບ) ຢູ່ສາງພາສີດ່ານສາກົນພູເກືອ.

II. ເງື່ອນໄຂເພື່ອເຂົ້າຮ່ວມການປະມູນຊື້ໄມ້ຍຶດຂອງແຂວງ.

1. ຜູ້ທີ່ມີໂຮງງານປຸງແຕ່ງໄມ້, ເຟີນີເຈີປຸງແຕ່ງໄມ້ທີ່ມີທະບຽນຖືກຕ້ອງຕາມກົດໝາຍ ຂອງ ສປປລາວ ຢູ່ພາຍໃນແຂວງ ແລະ ຕ່າງແຂວງ ( ໃຫ້ສຳເນົາຄັດຕິດ ), ຕ້ອງເປັນໂຮງງານທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ, ເປັນໂຮງງານທີ່ສາມາດປຸງແຕ່ງສຳເລັດຮູບໄດ້ ແລະ ບໍ່ຕັ້ງໃນ 03 ປະເພດປ່າ.

2. ຕ້ອງສາມາດຜະລິດເປັນຜະລິດຕະພັນສຳເລັດຮູບ ຕາມຂໍ້ຕົກລົງ ສະບັບເລກທີ 1833/ອຄ, ລົງວັນທີ 03 ຕຸລາ 2016 ແລະ ( ສະບັບປັບປຸງ ) ສະບັບເລກທີ 0002/ອຄ.ກຂອ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການຮັບຮອງເອົາລາຍການຜະລິດຕະພັນໄມ້ ເພື່ອສົ່ງອອກ ແລະ ຫ້າມສົ່ງອອກ.

3. ເງື່ອນໄຂຜູ້ທີ່ມີສິດເຂົ້າຮ່ວມການປະມູນ ຕ້ອງແມ່ນຜູ້ອຳນວຍການ ຫຼື ຕົວແທນ ຂອງໂຮງງານປຸງແຕ່ງໄມ້ ທີ່ໄດ້ຮັບການແຕ່ງຕັ້ງມອບສິດ, ສາມາດຕັດສິນບັນຫາໃນການປະມູນໄດ້.

4. ຕ້ອງເປັນໂຮງງານປຸງແຕ່ງໄມ້ທີ່ມີຄວາມພ້ອມທາງດ້ານຖານະການເງິນ, ມີໃບຢັ້ງຢືນຖານະການເງິນຈາກທະນາຄານຕິດຄັດມາພ້ອມ.

5. ຕ້ອງແມ່ນໂຮງງານປຸງແຕ່ງໄມ້ ທີ່ບໍ່ມີໜີ້ສິນ ຄ່າພັນທະອາກອນ ຕ່າງໆກັບລັດ. ກໍລະນີຜູ້ຊະນະການປະມູນ ຫາກມີໜີ້ສິນນຳລັດ ຄະນະກຳມະການປະມູນຊື້ - ຂາຍໄມ້ຂັ້ນແຂວງ ແມ່ນຈະໄດ້ມີການຄົ້ນຄ້ວາພິຈາລະນາ.

6. ຜູ້ຊະນະການປະມູນ ຕ້ອງຖອກເງິນມັດຈຳ 10 % ກ່ອນຂໍຂໍ້ຕົກລົງອະນຸມັດຂາຍຂອງທ່ານເຈົ້າແຂວງ.

III. ວັນເວລາເປີດເປີດຂາຍຊອງປະມູນ.

ຜູ້ທີ່ສົນໃຈໃຫ້ເຂົ້າມາພົວພັນຊື້ຊອງປະມູນ ທີ່ ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື ( ຂະແໜງການນຳເຂົ້າ ແລະ ສົ່ງອອກ ) ໃນໂມງລັດຖະການ.

- ກຳນົດວັນເວລາຂາຍຊອງປະມູນ ແມ່ນ 15 ວັນລັດຖະການ ( ນັບແຕ່ວັນທີ 24 ທັນວາ 2018 ຫາວັນທີ 07 ມັງກອນ 2019 ).
- ກຳນົດວັນເວລາມື້ເປີດຊອງປະມູນແມ່ນເວລາ 9 : 00 ໂມງເຊົ້າ ຂອງວັນທີ 08 ມັງກອນ 2019.
- ສະຖານທີ່ : ຫ້ອງປະຊຸມພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື.
- ລາຄາຊອງປະມູນ : 1.000.000 ກີບ/ຊອງ ( ສຳລັບຄ່າຊອງປະມູນນັ້ນ ແມ່ນບໍ່ໄດ້ສົ່ງຄືນ ).
- ກະລຸນາຖືຊອງປະມູນໄວ້ກັບຕົນເອງ ຈົນຮອດເວລາ 9 : 00 ໂມງເຊົ້າຂອງວັນທີ 08 ມັງກອນ 2019, ຈຶ່ງໃຫ້ມາມອບສົ່ງນຳຄະນະກຳມະການປະມູນຂາຍໄມ້ ທີ່ຫ້ອງປະຊຸມ : ພະແນກອຸດສາຫະກຳ ແລະການຄ້າ ແຂວງອັດຕະປື, ຖ້າກາຍຖືວ່າສະຫຼະສິດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອເຂົ້າຮ່ວມການປະມູນ ຕາມກຳນົດເວລາ ຂ້າງເທິງດ້ວຍ.

ຫົວໜ້າພະແນກອຸດສາຫະກຳ ແລະການຄ້າແຂວງ.
( ຄະນະກຳມະການປະມູນຂາຍໄມ້ຂັ້ນແຂວງ )

ຕິດຕໍ່ພົວພັນ:

- ທ່ານ ພະທັດໄຊ 020 2229 2298
- ທ່ານ ນາງຄານດາວອນ 020 2242 3777
- ທ່ານ ທິດປະກາຍສີ 020 5553 4456

ສັນຕິໄຊ ສີລືໄຊ

SANTISAY SILEUSAY